ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 245/ຫກ

ນະຄອນຫຼວງວຽງຈັນ, ວັນທີ.21.ມິຖຸນາ 2018

# ແຈ້ງການ

ເຖິງ: ພະນັກງານ, ທະຫານ, ຕຳຫຼວດ, ຊາວຄ້າຂາຍ, ຕະຫຼອດຮອດພໍ່ແມ່ປະຊາຊົນລາວ ບັນດາເຜົ່າ ໃນຂອບເຂດທົ່ວປະເທດ.

ເລື່ອງ: ເພີ່ມທະວີສະຕິລະວັງຕົວ ກ່ຽວກັບການນຳໃຊ້ເງິນຕາຕ່າງປະເທດເຂົ້າໃນການຊຳລະ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍອາຍາ ສະບັບປັບປຸງ ເລກທີ 12/ສພຊ ລົງວັນທີ 9 ພະຈິກ 2005;
- ອີງຕາມສະພາບປະກົດການຫຍໍ້ທໍ້ທີ່ພົບໃນການກວດນັບເງິນ ຂອງຂະແໜງທະນາຄານ.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງພະນັກງານ, ທະຫານ, ຕຳຫຼວດ, ຊາວຄ້າຂາຍ, ປະຊາຊົນລາວໃນຂອບເຂດທົ່ວປະເທດ ຊາບວ່າ: ອີງຕາມແຫຼ່ງຂ່າວຂອງເຈົ້າໜ້າທີ່ ໄດ້ລາຍງານໃຫ້ຮູ້ວ່າ ປັດຈຸບັນໄດ້ມີບຸກຄົນບໍ່ດີຊາວຕ່າງປະເທດນຳເງິນຕາຕ່າງປະເທດປອມ (ເງິນໂດລາສະຫະລັດ) ເຂົ້າມາຈໍລະຈອນຢູ່ບັນດາແຂວງພາກເໜືອ ຂອງ ສປປ ລາວ ເປັນຈຳນວນຫຼາຍສົມຄວນ. ສະນັ້ນ, ຫ້ອງການທະນາຄານແຫ່ງ ສປປ ລາວ **ຈຶ່ງຂໍແຈ້ງມາຍັງບັນດາທ່ານ ໃຫ້ເພີ່ມທະວີຄວາມເອົາໃຈໃສ່ ແລະ ມີສະຕິໃນການກວດກາເງິນຕາຕ່າງປະເທດທີ່ຕົນເອງນຳໃຊ້ ແລະ ການຖືຄອງຕ່າງໆ ເພື່ອຫຼີກລ່ຽງຜົນເສຍຫາຍທີ່ຈະເກີດແກ່ທ່ານ.**

ບຸກຄົນ ຫຼື ນິຕິບຸກຄົນໃດນຳເຂົ້າ, ປອມແປງ ຫຼື ນຳໃຊ້ເງິນຕາປອມ ຢູ່ດິນແດນ ສປປ ລາວ ແມ່ນຖືວ່າຜິດກົດໝາຍອາຍາ (ມາດຕາ 63) ແລະ ຈະຖືກດຳເນີນຄະດີຕາມກົດໝາຍ ຂອງ ສປປ ລາວ.

ໃນກໍລະນີຫາກພົບເຫັນໃບເງິນຕາຕ່າງປະເທດປອມ ຫຼື ສົງໃສວ່າເປັນເງິນຕາຕ່າງປະເທດປອມກະລຸນາແຈ້ງໄປຍັງກົມບໍລິການ, ທະນາຄານແຫ່ງ ສປປ ລາວ ໝາຍເລກໂທລະສັບ (021) 264036 ຫຼື (020) 54792626 ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ເພື່ອກວດກາຢັ້ງຢືນ ແລະ ເພື່ອປະສານສົມທົບກັບເຈົ້າໜ້າທີ່ດຳເນີນການກວດກາແຫຼ່ງທີ່ມາ ຕາມຂັ້ນຕອນຂອງລະບຽບ ແລະ ກົດໝາຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ປະຕິບັດຕາມຈິດໃຈຂອງແຈ້ງການນີ້ດ້ວຍ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la